ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 060 /ທຄຕລ ..2021.........

ນະຄອນຫຼວງວຽງຈັນ, ວັນທີ: .......14 JUN 2021.........

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາທ່ານຫຼືວໜ້າບໍລິສັດ, ຜູ້ສະໜອງ ທີ່ເປັນຕົວແທນຈຳໜ່າຍປະເພດເຄື່ອງຈັກນັບ ຄັດໄຈ້ ກວດເງິນປອມ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມປະມູນລາຄາ ເຄື່ອງຈັກນັບ-ຄັດໄຈ້-ກວດເງິນປອມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານ ຜູ້ສະໜອງເຄື່ອງຈັກ ຍື່ນຊອງປະມູນລາຄາ ເຄື່ອງຈັກທີ່ສາມາດ:ນັບເງິນ-ຄັດໄຈ້-ກວດເງິນປອມ ແລະ ລຽງໜ້າ**ລຸ້ນ 8 ຊ່ອງ** ຍີ່ຫໍ້ Glory ແລະ G&D-BPS ຈຳນວນ 02 ໜ່ວຍ ເພື່ອປະກອບເປັນເຄື່ອງມືຮັບໃຊ້ເຂົ້າໃນວຽກງານວິຊາສະເພາະຂອງທະນາຄານ ຕາມເງື່ອນໄຂດັ່ງລຸ່ມນີ້:

- **ເອກະສານຊອງທີ 1 (ບໍ່ປິດຊອງ)**
  - ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງຈັກນັບຄັດເງິນ, ຕ້ອງມີວິຊາການກ່ຽວກັບເຄື່ອງຈັກດັ່ງກ່າວໂດຍສະເພາະ ມີທີມຊ່າງໃຫ້ບໍລິການທົ່ວປະເທດ ແລະ ມີປະສົບການໃນການຂາຍຢ່າງໜ້ອຍ 05 ປີ ຂຶ້ນໄປ: ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍປີ 2019 ເປັນຕົ້ນມາ, ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ.
  - ລະບຸຍີ່ຫໍ້ ແລະ ຄຸນນະພາບຂອງເຄື່ອງຈັກ ເຊັ່ນ: ຂະໜາດ, ຄຸນສົມບັດຂອງເຄື່ອງຈັກ, ການອັບເດດ Software, ການຝຶກອົບຮົມການສອນໃຊ້ງານໃຫ້ພະນັກງານ ທຄຕລ, ລະບຸປີ-ປະເທດຜະລິດສິນຄ້າ, ກຳນົດເວລາສົ່ງເຄື່ອງ, ການຮັບປະກັນສິນຄ້າຢ່າງໜ້ອຍສອງປີ, ການບຳລຸງຮັກສາການບໍລິການຫຼັງການຂາຍ, ການຮັບປະກັນການເຖິມຄືນ ໃນກໍລະນີທີ່ເງິນປອມສາມາດຜ່ານໄດ້ແລ້ວແຕ່ເງື່ອນໄຂຂອງບໍລິສັດ ແລະ ເງື່ອນໄຂອື່ນໆໃຫ້ລະບຸລະອຽດ (ຖ້າມີ).
  - ຄວາມສາມາດຂອງຈັກ 8 ຊ່ອງ (ຢ່າງໜ້ອຍ): ນັບເງິນ ກວດເງິນປອມ ຄັດສະພາບເງິນໃໝ່ ກາງ ເກົ່າ ໄຈ້ປີນເງິນ ແລະ ລຽງໜ້າເງິນ; ກວດສະກຸນເງິນຢ່າງໜ້ອຍໄດ້ 6 ສະກຸນເງິນ (LAK, USD, CNY, THB, EUR, GBP); ຄວາມໄວໃນການນັບຕ້ອງປັບໄດ້ 2 ແບບ ຢ່າງໜ້ອຍ 1.000 ໃບ/ນາທີ ແລະ ຊ້າສຸດຕ້ອງ 750ໃບ/ນາທີ, ຊ່ອງຮັບເງິນທີ່ນັບແລ້ວຢ່າງໜ້ອຍ 500 ໃບ, ມີຊ່ອງວາງເງິນເຂົ້າຢ່າງໜ້ອຍ 2.000 ໃບ, ຈໍລະບົບສຳຜັດ 10 ນີ້ວ ແລະ ໃຫ້ບໍລິການບຳລຸງຮັກສາເຄື່ອງ ປົກກະຕິ 05 ຄັ້ງ/ປີ.
  - ກຳນົດຍື່ນຊອງ ແມ່ນວັນທີ 24/06/2021 ເວລາ 11.00 ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່ ທີ່ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ອາຄານ C.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

➢ **ເອກະສານຊອງທີ 2 (ປິດຊອງ):**

- ການສະເໜີລາຄາຕ້ອງເປັນສະກຸນເງິນກີບ ແລະ ລວມອາກອນມູນຄ່າເພີ່ມ 10%.
- ຄິດໄລ່ສະເລ່ຍ ລາຄາບຳລຸງຮັກສາຕໍ່ປີ (ສຳລັບປີຖັດໄປ ຫຼັງຈາກໝົດຄ້ຳປະກັນແລ້ວ).
- ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ (ວັນໝົດອາຍຸຂອງໜັງສືຄ້ຳປະກັນແມ່ນວັນທີ 30/07/2021) ຫຼື ແຊັກທີ່ວິຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
- ກຳນົດຍື່ນຊອງລາຄາ ແມ່ນວັນທີ 30/06/2021 ເວລາ 9.30 ໂມງ ທີ່ຫ້ອງປະຊຸມຊັ້ນ 3 ອາຄານ C (ເປີດຊອງລາຄາຊ່ອງໜ້າກັບຄະນະກຳມະການຂອງ ທຄຕລ).

**ໝາຍເຫດ:** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ**:

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແບ່ງຈ່າຍເປັນ 03 ງວດ ລຸ່ມນີ້:
    - ງວດທີ 1: ຊຳລະ 15% ຂອງມູນຄ່າ (ຈ່າຍລ່ວງໜ້າ) ຫຼັງຈາກເຊັນສັນຍາ ແລະ ຈົດທະບຽນສັນຍາແລ້ວ.
    - ງວດທີ 2: ຊຳລະ 75% ຂອງມູນຄ່າ ພາຍຫຼັງໄດ້ຮັບເຄື່ອງ, ຕິດຕັ້ງສຳເລັດ ແລະ ຜ່ານການກວດກາຈາກຄະນະກຳມະການ ທຄຕລ ພາຍໃນ 30 ວັນລັດຖະການ.
    - ງວດທີ 3: ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 6 ເດືອນ, ແຕ່ການຮັບປະກັນຄຸນນະພາບສິນຄ້າ ຕ້ອງແມ່ນຕາມໄລຍະເວລາຂອງສິນຄ້າດັ່ງກ່າວ ທີ່ຜູ້ສະໜອງແຈ້ງເບື້ອງຕົ້ນ, ຖ້າຫາກຜູ້ສະໜອງເມີນເສີຍ ບໍ່ເຂົ້າມາສ້ອມແປງບຳລຸງຮັກສາ ແມ່ນ ທຄຕລ ຈະປັບໄໝ 20% ຂອງມູນຄ່າ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນລາຄາໃນຄັ້ງນີ້ດ້ວຍ.

ປະທານຄະນະກຳມະການປະມູນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ບົນທະລາດ ແກ້ວປະເສີດ

ຕິດຕໍ່ສອບຖາມ: bidcommittee@bcel.com.la